ສາທາລະນະ ລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະໂຄສະນາອົບຮົມສູນກາງພັກ

ເລກທີ 74/ຄອສພ
ນະຄອນຫຼວງວຽງຈັນ; ວັນທີ 13/02/2024

# ຄໍາແນະນໍາ
## ຂອງຄະນະໂຄສະນາອົບຮົມສູນກາງພັກ
## ກ່ຽວກັບການນໍາໃຊ້ເອກະສານສຶກສາອົບຮົມການເມືອງ-ແນວຄິດ ເພື່ອດໍາເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ສໍາລັບ ສະມາຊິກພັກ, ພະນັກງານຮາກຖານ ແລະ ປະຊາຊົນຊັ້ນຄົນຕ່າງໆ ແບບຄໍາຖາມ-ຄໍາຕອບ

ເຖິງ: ຄະນະປະຈໍາພັກແຂວງ, ນະຄອນຫຼວງວຽງຈັນ, ຄະນະໂຄສະນາອົບຮົມແຂວງ, ຄະນະປະຈໍາພັກເມືອງ, ຄະນະໂຄສະນາອົບຮົມເມືອງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການນໍາໃຊ້ເອກະສານ ແລະ ການຈັດຕັ້ງສຶກສາອົບຮົມການເມືອງ-ແນວຄິດ ເພື່ອດໍາເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ສໍາລັບສະມາຊິກພັກ, ພະນັກງານຮາກຖານ, ປະຊາຊົນຊັ້ນຄົນຕ່າງໆ.

- ອີງຕາມຄໍາສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄລສພ, ລົງວັນທີ 8 ສິງຫາ 2023 ວ່າດ້ວຍການກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.
- ອີງຕາມຄໍາແນະນໍາ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 211/ຄຈສພ, ລົງວັນທີ 16 ສິງຫາ 2023 ກ່ຽວກັບການຈັດຕັ້ງປະຕິບັດຄໍາສັ່ງ ຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການກະກຽມ ແລະ ການດໍາເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.
- ອີງຕາມມະຕິຕົກລົງ ຂອງກົມການເມືອງສູນກາງພັກ ສະບັບເລກທີ 20/ກມສພ, ລົງວັນທີ 13 ຕຸລາ 2022 ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະໂຄສະນາອົບຮົມສູນກາງພັກ.

ເພື່ອເປັນການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ, ພະນັກງານຕະຫຼອດຮອດປະຊາຊົນຊັ້ນຄົນຕ່າງໆ ຮັບຮູ້, ເຂົ້າໃຈກ່ຽວກັບເນື້ອໃນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ, ທັງປຸກລະດົມໃຫ້ທົ່ວສັງຄົມເຂົ້າຮ່ວມປົກປັກຮັກສາປະເທດຊາດ ແລະ ພັດທະນາທ້ອງຖິ່ນ, ຂະແໜງການຂອງຕົນໃຫ້ເປັນຂະບວນການກ້ວາງຂວາງຟົດຟື້ນຕໍ່ເນື່ອງ, ຜ່ານຂະບວນການດັ່ງກ່າວສ້າງໄດ້ກົມກອງ, ບຸກຄົນດີເດັ່ນໃນທຸກຂົງເຂດວຽກງານ.



CamScanner

ຄະນະໂຄສະນາອົບຮົມສູນກາງພັກ ໄດ້ສ້າງເອກະສານທີ່ເປັນຄຳຖາມ-ຄຳຕອບ ກ່ຽວກັບເນື້ອໃນຄຳສັ່ງເລກທີ 411/ຄລສພ, ລົງວັນທີ 8 ສິງຫາ 2023 ແລະ ຄຳແນະນຳເລກທີ 211/ຄຈສພ, ລົງວັນທີ 16 ສິງຫາ 2023 ເພື່ອສຶກສາອົບຮົມການເມືອງ-ແນວຄິດສຳລັບສະມາຊິກພັກ, ພະນັກງານຮາກຖານ ແລະ ປະຊາຊົນທົ່ວໄປ. ສະນັ້ນ; ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ ຄະນະໂຄສະນາອົບຮົມສູນກາງພັກ ແນະນຳບາງບັນຫາ ດັ່ງນີ້:

**I. ຈຸດປະສົງ-ລະດັບຄາດໝາຍ.**

- ເພື່ອສຶກສາອົບຮົມການເມືອງ-ແນວຄິດ ໃຫ້ປະຊາຊົນບັນດາເຜົ່າ ທຸກຊັ້ນຄົນ ໃນທົ່ວປະເທດຮັບຮູ້, ເຂົ້າໃຈ, ມີຄວາມເປັນເອກະພາບ ແລະ ກຳແໜ້ນເນື້ອໃນ ການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ໂດຍສະເພາະຄວາມສຳຄັນຂອງກອງປະຊຸມ 3 ຂັ້ນ ຂອງພັກ, ກຳແໜ້ນເຖິງການຍົກສູງບົດບາດການນຳພາຂອງພັກເຂົ້າໃນວຽກງານຕ່າງໆ ພ້ອມດຽວກັນນັ້ນ ຍັງເປັນການຝຶກຝົນຫຼໍ່ຫຼອມຕົນເອງທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດຂອງສະມາຊິກພັກ, ພະນັກງານ ແລະ ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ຂອງສະມາຊິກພັກ, ພະນັກງານ, ສ້າງການຫັນປ່ຽນທັດສະນະຄວາມຮັບຮູ້, ແນວຄິດ, ການກະທຳ, ສົ່ງເສີມດ້ານດີ, ແກ້ໄຂຂໍ້ບົກພ່ອງ, ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຕ່າງໆ ເພື່ອແນ່ໃສ່ຍູ້ແຮງການຈັດຕັ້ງຜັນຂະຫຍາຍ ເຂົ້າສູ່ການປະຕິບັດຕົວຈິງ ໃຫ້ກາຍເປັນຂະບວນການອັນກວ້າງຂວາງ.

- ເພື່ອສຶກສາອົບຮົມປະຊາຊົນລາວບັນດາເຜົ່າ ໃຫ້ມີຄວາມເດັດດ່ຽວໜຽວແໜ້ນ, ບໍ່ຫວັ່ນໄຫວຄອນແຄນຕໍ່ສະພາບການຕ່າງໆ; ມີສະຕິລະວັງຕົວຕໍ່ກົນອຸບາຍມ້າງເພທຳລາຍຂອງອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີ ແລະ ການເສື່ອມຖອຍທາງດ້ານຄຸນທາດການເມືອງ, ແບບແຜນການດຳລົງຊີວິດ, ຮັບປະກັນໃນການປົກປັກຮັກສາ ແລະ ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນພາຍໃນພັກ ແລະ ສັງຄົມໃຫ້ແໜ້ນໜາຍິ່ງຂຶ້ນ.

- ບົນພື້ນຖານຄວາມຮັບຮູ້, ເຂົ້າໃຈດັ່ງກ່າວນັ້ນ ເຮັດໃຫ້ສະມາຊິກພັກ, ພະນັກງານຮາກຖານ ແລະ ປະຊາຊົນຊັ້ນຄົນຕ່າງໆມີຄວາມເຂັ້ມແຂງ, ໜັກແໜ້ນ ກາຍເປັນກຳລັງແຮງອັນແຂງແກ່ນແໜ້ນໜາ ແລະ ມີສ່ວນຮ່ວມເຂົ້າໃນການປົກປັກຮັກສາ, ພັດທະນາປະເທດຊາດ, ເປັນເຈົ້າການອຸທິດສະຕິປັນຍາ ແລະ ເຫື່ອແຮງເຂົ້າໃນພາລະກິດ, ເຮັດໃຫ້ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

**II. ເນື້ອໃນ.**

ນຳໃຊ້ເນື້ອໃນເອກະສານແບບຄຳຖາມ-ຄຳຕອບສຶກສາອົບຮົມການເມືອງ-ແນວຄິດ ສຳລັບສະມາຊິກພັກ, ພະນັກງານຮາກຖານ ແລະ ປະຊາຊົນຊັ້ນຄົນຕ່າງໆ ເພື່ອຮັບຮູ້, ເຂົ້າໃຈກ່ຽວກັບການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ຊຶ່ງປະກອບມີ 20 ຄຳຖາມ-ຄຳຕອບ.



CamScanner

**III. ເປົ້າໝາຍເຂົ້າຮ່ວມສຶກສາອົບຮົມ.**

- ແມ່ນສະມາຊິກພັກ, ພະນັກງານທີ່ເປັນຫຼັກແຫຼ່ງຢູ່ຮາກຖານບ້ານ, ເລຂາໜ່ວຍພັກ, ຮອງເລຂາໜ່ວຍພັກບ້ານ, ແນວໂຮມ, ປກຊ-ປກສ, ຄູ-ອາຈານ, ແພດໝໍ, ອົງການຈັດຕັ້ງມະຫາຊົນ ແລະ ຫົວໜ້າໜ່ວຍ.

- ປະຊາຊົນບັນດາເຜົ່າທຸກຊັ້ນຄົນ (ຜູ້ເປັນຫົວໜ້າຄອບຄົວ) ແລະ ປະຊາຊົນທີ່ມີອາຍຸແຕ່ 18 ປີ ຂຶ້ນໄປ.

**IV. ວິທີຈັດຕັ້ງປະຕິບັດ.**

1. ໃຫ້ຄະນະພັກແຂວງ, ຄະນະພັກນະຄອນຫຼວງ, ຄະນະໂຄສະນາອົບຮົມແຂວງ, ຄະນະພັກເມືອງ-ນະຄອນ, ໂຄສະນາອົບຮົມເມືອງ ແລະ ຄະນະພັກຮາກຖານ ແຕ່ລະບ່ອນຕ້ອງເປັນເຈົ້າການນຳເອົາເອກະສານນີ້ຈັດຕັ້ງສຶກສາອົບຮົມສະມາຊິກພັກ, ພະນັກງານຮາກຖານ ແລະ ປະຊາຊົນຊັ້ນຄົນຕ່າງໆ ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ ແລະ ເລິກເຊິ່ງ ໂດຍອີງໃສ່ສະພາບການຕົວຈິງ ຂອງແຕ່ລະບ່ອນ.

- ບ່ອນໃດສະມາຊິກພັກ, ພະນັກງານຮາກຖານຫຼາຍ, ບ້ານໃດມີພົນລະເມືອງຫຼາຍອາດຈັດຕັ້ງສຶກສາອົບຮົມເປັນຫຼາຍຊຸດ ຕາມຄວາມເໝາະສົມຂອງແຕ່ລະບ່ອນ ແລະ ແຕ່ລະບ້ານ (ສຳລັບຂັ້ນບ້ານອາດຈະຊຸມເອົາແຕ່ຫົວໜ້າຄອບຄົວມາສຶກສາອົບຮົມກໍໄດ້).

2. ຫຼັງຈາກມີການຈັດຕັ້ງອົບຮົມແລ້ວ, ໃນແຕ່ລະມື້ ແມ່ນມອບໃຫ້ທ່ານນາຍບ້ານ, ຄະນະບ້ານ ນຳເອົາເນື້ອໃນດັ່ງກ່າວ (20 ຄຳຖາມ-ຄຳຕອບ) ເວົ້າຜ່ານໂທລະໂຄ່ງຂອງບ້ານ, ດ້ວຍຮູບການອ່ານ ຫຼື ເວົ້າ ແລະ ຄັດຈ້ອນເອົາແຕ່ລະຫົວຂໍ້ມາເວົ້າໃນແຕ່ລະມື້ ເພື່ອໃຫ້ປະຊາຊົນຮັບຮູ້-ເຂົ້າໃຈ; ສຳລັບໜ່ວຍພັກ ກໍຕ້ອງເວົ້າໃນເວລາດຳເນີນຊີວິດພັກ.

3. ກຳນົດເວລາຮຽນເອກະສານ 1 ວັນ.

- ສຳລັບຜູ້ມາບັນຍາຍແມ່ນເລຂາຄະນະພັກຮາກຖານ ແລະ ເລຂາໜ່ວຍພັກບ້ານ.

- ມອບໃຫ້ຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງວຽງຈັນ, ເມືອງ-ນະຄອນ ທີ່ເປັນເສນາທິການ ໃຫ້ຄະນະພັກຂັ້ນຂອງຕົນ ຈັດຕັ້ງສຶກສາອົບຮົມເອກະສານນີ້ ຕາມພາລະບົດບາດຂອງຕົນ.

4. ພາຍຫຼັງຈັດຕັ້ງຮ່ຳຮຽນ ສຶກສາອົບຮົມສຳເລັດແລ້ວ ໃຫ້ລາຍງານໄປຍັງ ຄະນະໂຄສະນາອົບຮົມສູນກາງພັກ ຮັບຊາບ.

ດັ່ງນັ້ນ, ຈຶ່ງແນະນຳມາເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

**ຄຳພັນ ເຜີຍຍະວົງ**



CamScanner